ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ຄະນະກຳມາທິການແຫ່ງຊາດ
ເພື່ອການພັດທະນາຊັບພະຍາກອນມະນຸດ

ນະຄອນຫລວງວຽງຈັນ, ວັນທີ 23 JUN 2014

ມະຕິ
ກອງປະຊຸມ ຄັ້ງທີ II ຂອງຄະນະກຳມາທິການແຫ່ງຊາດ
ເພື່ອການພັດທະນາຊັບພະຍາກອນມະນຸດ

ກອງປະຊຸມຄັ້ງທີ II ຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ (ຄຊພຊ) ໄດ້ຈັດຂຶ້ນໃນວັນທີ 18 (ວັນພຸດ) ມິຖຸນາ 2014 ທີ່ ໂຮງແຮມລ້ານຊ້າງ ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງ ທ່ານ ດຣ. ພັນຄຳ ວິພາວັນ, ກຳມະການ ກົມການເມືອງສູນກາງພັກ, ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ, ປະທານຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ໂດຍມີບັນດາທ່ານກຳມະການ ຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ, ຄະນະປະສານງານ ເພື່ອການພັດທະນາຊັບພະຍາກອນມະນຸດຂອງກະຊວງ ແລະ ອົງການທຽບເທົ່າ ແລະ ຄະນະຮັບຜິດຊອບກອງປະຊຸມ ລວມທັງໝົດ 65 ທ່ານ (ຍິງ 21 ທ່ານ).

ກອງປະຊຸມໄດ້ນຳສະເໜີບັນດາເອກະສານຕ່າງໆດັ່ງນີ້:
(1) ລາຍງານຄວາມຄືບໜ້າ ແລະ ແຜນປະຕິບັດງານຂອງວຽກງານການປັບປຸງຍຸດທະສາດການພັດ ທະນາຊັບພະຍາກອນມະນຸດ; (2) ລາຍງານຮ່າງຂອບຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025; (3) ສະເໜີຂອບນະໂຍບາຍແຜນແບ່ງປັນ ຊັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນຕໍ່ ພາຍໃນປະເທດ ສຳລັບສົກປີ 2014-2015.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳຄິດຄຳເຫັນຢ່າງຕັ້ງໜ້າ ຜູ້ແທນກອງປະຊຸມໄດ້ມີຄວາມ ເປັນເອກະພາບຮັບຮອງເອົາບາງບັນຫາສຳຄັນ ເປັນມະຕິກອງປະຊຸມ ດັ່ງນີ້:

1. ເຫັນດີໂດຍພື້ນຖານຕໍ່ ບົດລາຍງານຄວາມຄືບໜ້າ ແລະ ແຜນປະຕິບັດງານຂອງວຽກງານການປັບປຸງຍຸດທະສາດການພັດທະນາຊັບພະຍາກອນມະນຸດ ມອບໃຫ້ກອງເລຂາ ຄຊພຊ ນຳໄປຄົ້ນຄວ້າ ແລະ ສ້າງເປັນແຜນປະຕິບັດງານລະອຽດ ແລ້ວລາຍງານໃຫ້ ຄຊພຊ ຊາບເປັນແຕ່ລະໄລຍະ.
2. ກອງປະຊຸມເຫັນດີ ແລະ ຮັບຮອງເອົາຂອບຍຸດທະສາດການພັດທະນາຊັບພະຍາກອນ ມະນຸດແຫ່ງຊາດ ຮອດປີ 2025 ຊຶ່ງປະກອບດ້ວຍ 5 ພາກ ຄື: (1) ການວິເຄາະສະພາບການ; (2) ວິໄສທັດ, ພາລະກິດ, ຫລັກການພື້ນຖານ ແລະ ຈຸດປະສົງຫລັກຂອງຂອບຍຸດທະສາດການພັດທະນາຊັບພະ

ຍາກອນມະນຸດ; (3) ຍຸດທະສາດຫລັກ 6 ຂໍ້; ສໍາລັບພາກທີ (4) ແລະ (5) ຈະໄດ້ສືບ ຕໍ່ຄົ້ນຄ້ວາຕໍ່ໄປຄື: ແຜນປະຕິບັດງານ ແຕ່ປີ 2016-2020 ແລະ ກົນໄກການລາຍງານ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງ ປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດ ແລະ ມອບໃຫ້ກອງເລຂານໍາໄປຄົ້ນຄວ້າ ແລະ ປັບປຸງຕາມການປະກອບຄໍາເຫັນຂອງຜູ້ແທນກອງປະຊຸມ ແລ້ວສົ່ງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ນໍາໄປຈັດຕັ້ງ ຜັນຂະຫຍາຍ ຕາມຄວາມຮັບຜິດຊອບຂອງຕົນ.

3. ຮັບຮອງເອົາຂອບນະໂຍບາຍແຜນແບ່ງປັນ ສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນຕໍ່ ພາຍໃນປະເທດ ສໍາລັບສົກປີ 2014-2015 ແລະ ມອບໃຫ້ກອງເລຂານໍາໄປຄົ້ນຄວ້າ ແລະ ປັບປຸງຕາມການປະກອບຄໍາເຫັນຂອງຜູ້ແທນກອງປະຊຸມ ແລ້ວສ້າງເປັນແຜນແບ່ງປັນ ສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນຕໍ່ພາຍໃນປະເທດ. ເມື່ອໄດ້ຮັບຮອງຢ່າງເປັນທາງການແລ້ວ ແຈ້ງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ນໍາໄປຈັດຕັ້ງ ປະຕິບັດຕາມຄວາມຮັບຜິດຊອບຂອງຕົນ.
4. ເຫັນດີໃຫ້ພາກສ່ວນທີ່ກ່ຽວຂ້ອງທຸກຂັ້ນ ຈົ່ງໃຫ້ການຮ່ວມມືກັບຄະນະວິຊາການໃນຂັ້ນລົງສໍາຫລວດທັກສະຂອງລັດຖະກອນ ສ.ປ.ປ ລາວ ນັບແຕ່ວັນທີ 19 ມິຖຸນາ ເຖິງວັນທີ 18 ສິງຫາ 2014.
5. ມອບໃຫ້ກອງເລຂາຂອງຄະນະກໍາມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດເປັນໃຈກາງໃນການປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງ, ຕິດຕາມ, ຊຸກຍູ້ການປັບປຸງຍຸດທະສາດພັດທະນາຊັບພະຍາກອນມະນຸດ, ຈັດກອງປະຊຸມວິຊາການເພື່ອຄົ້ນຄວ້າ ປະກອບຄໍາເຫັນໃສ່ເອກະສານໃຫ້ຄົບຖ້ວນ ແລະ ລາຍງານຄະນະກໍາມາທິການແຫ່ງຊາດເພື່ອການພັດທະນາ ຊັບພະຍາກອນມະນຸດ ກໍ່ຄືລັດຖະບານຮັບຊາບເປັນແຕ່ລະໄລຍະ.
6. ກອງປະຊຸມ ຄຊພຊ ຄັ້ງທີ 3 ຈະຈັດຂຶ້ນໃນລະຫວ່າງ ເດືອນທັນວາ (12) 2014.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ
ປະທານຄະນະກໍາມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ

ກະຊວງສຶກສາທິການ ແລະ ກິລາ
ລັດຖະມົນຕີ

ດຣ.ພັນຄໍາ ວິພາວັນ